# ບົດປະກອບຄຳເຫັນ
# ຂອງຄະນະປະຈຳ ສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານກ່ຽວກັບ ການພັດທະນາຊັບພະຍາກອນມະນຸດ ທີ່ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ໃນແຕ່ໄລຍະ ໂດຍສະເພາະການສ້າງຊັບພະຍາກອນມະນຸດ ໃຫ້ໄປຕາມຂະແໜງການບູລິມະສິດ ເປັນຕົ້ນ ວິຊາການສະເພາະດ້ານໃນສາຂາວິຊາກະສິກຳ, ຄູ ແລະ ພະຍາບານ ເພື່ອສາມາດຕອບສະໜອງໃຫ້ແກ່ການພັດທະນາປະເທດຊາດ ແລະ ແກ້ໄຂຄວາມທຸກຍາກ ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ VIII, ຄັ້ງວັນທີ 5 ມິຖຸນາ 2019

*ສະເໜີໂດຍ: ທ່ານ ປອ. ສົມພູ ດວງສະຫວັນ, ກຳມະການຄະນະປະຈຳສະພາແຫ່ງຊາດ ປະທານກຳມາທິການວັດທະນະທຳ-ສັງຄົມ*

ຮຽນ: - ທ່ານ ປະທານ ແລະ ຄະນະ ປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖື ຢ່າງສູງ!
- ທ່ານ ນາຍົກ, ບັນດາທ່ານຮອງນາຍົກ ທີ່ນັບຖື!
- ບັນດາທ່ານ ລັດຖະມົນຕີ, ບັນດາ ທ່ານ ສະມາຊິກສະພາແຫ່ງຊາດ ທີ່ນັບຖື ແລະ ຮັກແພງ!
- ທ່ານຍິງ, ທ່ານຊາຍ ທີ່ນັບຖື ແລະ ຮັກແພງ!

ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງ ແລະ ພາກພູມໃຈຢ່າງຍິ່ງທີ່ໄດ້ຮັບອະນຸຍາດຈາກທ່ານປະທານກອງປະຊຸມ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຂຶ້ນປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ ທີ່ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ແຕ່ລະໄລຍະໃຫ້ໄປຕາມຂະແໜງບູລິມະສິດ ເປັນຕົ້ນ ວິຊາສະເພາະສາຂາ ກະສິກຳ, ຄູ ແລະ ພະຍາບານ ເພື່ອຕອບສະໜອງໃຫ້ແກ່ການພັດທະນາປະເທດຊາດ ແລະ ແກ້ໄຂຄວາມທຸກຍາກ ໃນກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ VIII.

ກ່ອນອື່ນຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ແລະ ເປັນເອກະພາບ ຕໍ່ບົດລາຍງານຂອງລັດຖະບານ ທີ່ໄດ້ສະເໜີໄປນັ້ນ ຊຶ່ງໄດ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍບັນດາມະຕິກອງປະຊຸມໃຫຍ່ຂອງພັກໃນແຕ່ລະສະໄໝ ໂດຍສະເພາະກອງປະຊຸມໃຫຍ່ຂອງພັກສະໄໝທີ X ເປັນອັນລະອຽດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະໂດຍມີການກຳນົດວິໄສທັດ, ຍຸດທະສາດ ຊຶ່ງມີ 6 ຍຸດທະສາດຫຼັກ ແລະ 3 ຍຸດທະສາດ ປິ່ນອ້ອມ, ມີຄາດໝາຍສູ້ຊົນໃນແຕ່ລະໄລຍະ ຊຶ່ງແນໃສ່ສ້າງຊັບພະຍາກອນ

ມະນຸດເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມທິດທັນເປັນອຸດສາຫະກຳ ແລະ ທັນສະໄໝ, ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນ ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ, ມີຄຸນທາດການເມືອງ, ມີຄຸນສົມບັດສົມທຳປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີຄວາມຊຳນານງານ ແລະ ມີຈຳນວນພຽງພໍຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ.

ຕໍ່ກັບການສ້າງຊັບພະຍາກອນມະນຸດຕາມຂະແໜງການບູລິມະສິດ ໂດຍສະເພາະໃນສາຂາວິຊາ ກະສິກຳ, ຄູ ແລະ ພະຍາບານ ເຫັນວ່າ ບັນດາຂະແໜງການທີ່ກ່ຽວຂ້ອງໄດ້ຜັນຂະຫຍາຍຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ວາງແຜນກໍ່ສ້າງຊັບພະຍາກອນມະນຸດ ເພື່ອຮັບໃຊ້ສັງຄົມ ໄດ້ທັງປະລິມານ ແລະ ຄຸນນະພາບປະກອບສ່ວນເຂົ້າໃນການຜະລິດ, ສ້າງຄົນໃຫ້ມີຄວາມຮູ້, ຄວາມສາມາດ, ສົ່ງເສີມການມີສຸຂະພາບທີ່ວປວງຊົນ ແນໃສ່ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ເຮັດໃຫ້ເສດຖະກິດມີການຂະຫຍາຍຕົວຂຶ້ນ.

ຄຽງຄູ່ກັນນັ້ນ, ກໍ່ຍັງເຫັນວ່າການກໍ່ສ້າງຊັບພະຍາກອນມະນຸດຍັງບໍ່ທັນສອດຄອງກັບຍຸດທະສາດການພັດທະນາ ແລະ ໂຄງປະກອບເສດຖະກິດຂອງຊາດ. ການຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃຫ້ເປັນແຜນງານໃນລະດັບ ກະຊວງ ແລະ ແຂວງ ຍັງຂາດຄູ່ມືແນະນຳກ່ຽວກັບການປະຕິບັດວຽກຈຸດສຸມ ຫລື ໂຄງການທີ່ຕິດພັນກັບການວາງແຜນ ກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດເປັນຕົ້ນ ການກໍ່ສ້າງພະນັກງານ-ລັດຖະກອນ ທີ່ມີຄຸນທາດການເມືອງ, ເປັນມືອາຊີບ, ເປັນ ນັກວິຊາການ ແລະ ຜູ້ບໍລິຫານທີ່ເກັ່ງ ຍັງເປັນສິ່ງທ້າທາຍ, ບໍ່ສາມາດຮັບປະກັນໄດ້ການສ້າງພະນັກງານສືບທອດປ່ຽນແທນ, ຂາດການປະເມີນຄວາມຕ້ອງການ ແລະ ການສະໜອງພະນັກງານໃນຕຳແໜ່ງງານຕ່າງໆ; ການບັນຈຸຊັບຊ້ອນນັກສຶກສາທີ່ຮຽນຈົບບໍ່ທັນສອດຄ່ອງກັບວິຊາສະເພາະທີ່ຮຽນມາ; ການປະສົມທົບລະຫວ່າງສະຖານການສຶກສາກັບຜູ້ປະກອບການລວມທັງການວາງແຜນຄວາມຕ້ອງການກຳລັງແຮງງານຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ການສ້າງບຸກຄະລາກອນຂອງບັນດາສະຖາບັນການສຶກສາທັງພາກລັດ ແລະ ເອກະຊົນ ທີ່ສ້າງວິຊາການດ້ານກະສິກຳຍັງບໍ່ທັນເຊື່ອມໂຍງກັບຕະຫຼາດແຮງງານ ແລະ ບໍ່ທັນຕິດພັນກັບຄວາມຕ້ອງການຂອງຊຸມຊົນເພື່ອສົ່ງເສີມການຜະລິດເປັນສິນຄ້າ, ການຈັດຝຶກອົບຮົມ ການປູກຝັງ, ລ້ຽງສັດ ແລະ ການຖ່າຍທອດເຕັກໂນໂລຊີໃໝ່ ໃນການຜະລິດກະສິກຳແບບທັນສະໄໝໃຫ້ແກ່ຊາວກະສິກອນ ຍັງເຮັດໄດ້ໜ້ອຍ, ການສ້າງບຸກຄະລາກອນດ້ານ ການປູກເຂົ້າ, ພືດລົ້ມລຸກ, ຕົ້ນໄມ້ກິນໝາກ, ສັດຕະວະແພດ ຍັງມີຈຳນວນຈຳກັດ, ການກໍ່ສ້າງພະນັກງານວິຊາການກັບທີ່ດ້ານກະສິກຳ ໃຫ້ໄດ້ 3-5 ຄົນ ຕໍ່ບ້ານໃນໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຍັງບໍ່ທັນສາມາດຈັດຕັ້ງ

ປະຕິບັດໄດ້ຢ່າງເປັນລະບົບ ເປັນຕົ້ນ ຢູ່ສູນ, ສະຖາບັນການບໍລິການເຕັກນິກ ຂັ້ນແຂວງ, ເມືອງ ຈຳນວນໜຶ່ງ; ການກໍ່ສ້າງບຸກຄະລາກອນຄູຍັງບໍ່ທັນສອດຄ່ອງຕາມຄວາມຕ້ອງການຕົວຈິງ ແລະ ຍັງບໍ່ຮັບປະກັນທາງດ້ານຄຸນນະພາບ, ຄວາມຕ້ອງການຄູ ໃນສາຍສາມັນ ແລະ ສາຍອາຊີວະສຶກສາຍັງມີຫຼາຍ ແຕ່ການຕອບສະໜອງໂກຕ້າຍັງຈຳກັດ, ການບັນຈຸຊັບຊ້ອນຄູຍັງບໍ່ຖືກຕ້ອງຕາມວິຊາສະເພາະທີ່ ຕ້ອງການຕົວຈິງເນື່ອງມາຈາກການກຳນົດຕຳແໜ່ງງານໃນແຕ່ລະໂຮງຮຽນ ບໍ່ລະອຽດຊັດເຈນ, ສະເພາະການສຶກສາກ່ອນໄວຮຽນ ແລະ ສາຍສາມັນຍັງມີຄູອາສາສະໝັກ ເປັນຈຳນວນຫຼາຍ ໃນປີ 2018 ມີເຖິງ 12.267 ຄົນ ຊຶ່ງເປັນບັນຫາທ້າທາຍທີ່ຈະຕ້ອງສືບຕໍ່ແກ້ໄຂ; ໂດຍລວມເຫັນວ່າສະພາບການສ້າງ ແລະ ການບັນຈຸ ສັບຊ້ອນ ບຸກຄະລາກອນການແພດຍັງບໍ່ທັນຮັດກຸມ ມີປາກົດການເຫຼືອບໍ່ພໍ ເປັນຕົ້ນ ບຸກຄະລາກອນແພດທີ່ປະຈຳສຸກສາລາບໍ່ພຽງພໍຕາມຄາດໝາຍ 5-7 ຄົນ ສະເລ່ຍທົ່ວປະເທດມີພຽງ 2,7 ຄົນ, ຄວາມຮັບຜິດຊອບຕໍ່ວິຊາຊີບ, ການປະຕິບັດມາດຕະຖານການປິ່ນປົວ, ຈັບຍາບັນ,ຈັນຍາທຳ ຂອງບຸກຄະລາກອນແພດຈຳນວນໜຶ່ງຍັງບໍ່ສູງເຖິງວ່າການສ້າງບຸກຄະລາກອນການແພດໄດ້ເພີ່ມຂຶ້ນແຕ່ການສ້າງພະຍາບານຍັງມີຈຳນວນໜ້ອຍ.

**ຮຽນ ທ່ານປະທານ ແລະ ຄະນະປະທານ ທີ່ນັບຖື!**

**ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ນັບຖື ແລະ ຮັກແພງ**

ຕໍ່ກັບທິດທາງ ແລະ ມາດຕະການແກ້ໄຂ ຂອງສາມຂະແໜງການບູລິມະສິດ ທີ່ລັດຖະບານໄດ້ສະເໜີມານັ້ນ ໂດຍພື້ນຖານຄະນະປະຈຳສະພາແຫ່ງຊາດ ເຫັນດີເປັນເອກະພາບ ແຕ່ສະເໜີບາງຄວາມເຫັນເພີ່ມເຕີມ ດັ່ງນີ້:

1. ເພີ່ມທະວີການຊີ້ນຳ-ນຳພາ ຂອງຄະນະນຳທຸກຂັ້ນ ໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃຫ້ເປັນວຽກບູລິມະສິດຂອງຕົນ ພ້ອມທັງມີການເຜີຍແຜ່ໃຫ້ອົງການຈັດຕັ້ງລັດ, ພະນັກງານ-ລັດຖະກອນ ແລະ ສັງຄົມ ຮັບຮູ້, ເຂົ້າໃຈ ຢ່າງກວ້າງຂວາງ;

2. ຮີບຮ້ອນຄົ້ນຄ້ວາ, ສ້າງ ແລະ ປັບປຸງ ນິຕິກຳທີ່ກ່ຽວຂ້ອງ ທີ່ເຫັນວ່າຍັງຂາດ ຫຼື ບໍ່ສອດຄ່ອງ ໃຫ້ເປັນລະບົບຄົບຊຸດ, ສ້າງຄູ່ມື ແລະ ຄຳແນະນຳກ່ຽວກັບການວາງແຜນກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ເພື່ອເປັນບ່ອນອີງພື້ນຖານໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດໃນແຕ່ລະຂັ້ນໃຫ້ເປັນຮູບປະທຳ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານພັດທະນາຊັບພະຍາກອນມະນຸດໃນສາມຂະແໜງການບູລິມະສິດໃຫ້ບັນລຸຕາມຄາດໝາຍ;

3. ຮີບຮ້ອນສ້າງກົນໄກການປະສານສົມທົບ ຄະນະກຳມາທິການພັດທະນາຊັບພະຍາກອນມະນຸດ ແຕ່ລະຂັ້ນ ໃຫ້ຈະແຈ້ງ, ສ້າງລະບົບຕິດຕາມປະເມີນຜົນ ແລະ ມີການລາຍງານເປັນປົກກະຕິ;

4. ສຸມໃສ່ເກັບກຳ ແລະ ປະເມີນຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ພັດທະນາລະບົບຂໍ້ມູນ-ຂ່າວສານ ການພັດທະນາຊັບພະຍາກອນມະນຸດ ແນໃສ່ສ້າງ ແລະ ຄຸ້ມຄອງບຸກຄະລາກອນໃຫ້ລວມສູນ, ເປັນເອກະພາບທົ່ວປະເທດ ໃນການສ້າງແຜນພັດທະນາບຸກຄະລາກອນຂອງຂະແໜງການ ຮັບປະກັນໂຄງປະກອບໃຫ້ມີ ເຜົ່າ, ເພດຍິງ ເພື່ອສືບທອດ ປ່ຽນແທນ ສາມາດຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດແຮງງານ ທັງພາຍໃນ ແລະ ຕ່າງປະເທດ;

5. ເພີ່ມທະວີປຸກລະດົມໂຄສະນາ, ເຜີຍແຜ່, ສ້າງຄວາມເຂົ້າໃຈ ແລະ ແນະແນວວິຊາຊີບ ໃຫ້ແກ່ນັກຮຽນສາຍສາມັນ ທັງພາກລັດ ແລະ ເອກະຊົນ ເພື່ອຕີຖອຍກະແສຄ່ານິຍົມຂອງສັງຄົມ ແລະ ຫັນໄປຕາມຄວາມຕ້ອງການຂອງຕະຫຼາດແຮງງານ;

6. ຈັດສັນງົບປະມານ ແລະ ເພີ່ມການລົງທຶນຂອງລັດສະເພາະເຂົ້າໃນວຽກງານຈຸດສຸມ ແລະ ບູລິມະສິດ ເພື່ອຊຸກຍູ້ການກໍ່ສ້າງ ແລະ ພັດທະນາຊັບພະຍາກອນມະນຸດ ເປັນຕົ້ນການສ້າງຫໍພັກນັກສຶກສາໃຫ້ຜູ້ດ້ອຍໂອກາດທີ່ມາຮຽນ ກະສິກຳ, ຄູ ແລະ ພະຍາບານ ແລະ ປະຊາຊົນທີ່ມາຝຶກອົບຮົມຢູ່ສະຖານການສຶກສາທີ່ເປັນຕົວແບບດ້ານກະສິກຳ.

**ຮຽນ ທ່ານປະທານ ແລະ ຄະນະປະທານ ທີ່ນັບຖື.**
**ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ນັບຖື ແລະ ຮັກແພງ**

ທັງໝົດທີ່ໄດ້ສະເໜີມາຂ້າງເທິງນັ້ນ ແມ່ນທັດສະນະ ຄວາມເຫັນ ຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ການພັດທະນາຊັບພະຍາກອນມະນຸດ ໃນຂະແໜງການບູລິມະສິດ ເພື່ອເປັນພື້ນຖານໃຫ້ແກ່ ບັນດາທ່ານສະມາຊິກ ສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ໄດ້ຄົ້ນຄ້ວາ ພິຈາລະນາ, ປະກອບຄຳເຫັນ ກ້າວໄປສູ່ຮັບຮອງເອົາວຽກດັ່ງກ່າວໄດ້.

ທ້າຍສຸດນີ້ ຂໍອວຍພອນໃຫ້ປະທານ, ຄະນະປະທານ, ບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກ ລັດຖະບານ ແລະ ທຸກທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຈົ່ງມີສຸຂະພາບເຂັ້ມແຂງມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ ອວຍພອນໃຫ້ກອງປະຊຸມຈົ່ງມີຜົນສຳເລັດຕາມຄາດໝາຍ.

**ຂໍຂອບໃຈ**